## ມິຊຊາອາທິດທີ 18 ກຳນົດທຳມະດາ ປີ B
## ວັນອາທິດທີ 05 ສິງຫາ 2018



**ພຣະວໍລະສານໂດຍນັກບຸນຢວງ 6, 24-35**

ເມື່ອຝູງຊົນເຫັນວ່າພຣະເຢຊູເຈົ້າແລະພວກລູກສິດບໍ່ຢູ່ທີ່ນັ້ນ, ພວກເຂົາຈຶ່ງພາກັນລົງເຮືອກັບເມືອເມືອງກາຟານາອຸມເພື່ອຊອກຫາພຣະອົງ. ເມື່ອພົບເຫັນພຣະອົງຢູ່ຟາກນັ້ນແລ້ວ ພວກເຂົາທູນພຣະອົງວ່າ: ພຣະອາຈານ, ທ່ານມາເຖິງທີ່ນີ້ເວລາໃດ? ພຣະເຢຊູເຈົ້າກ່າວຕອບວ່າ: ເຮົາບອກພວກເຈົ້າເປັນຄວາມຈິງວ່າ: ພວກເຈົ້າຊອກຫາເຮົາບໍ່ແມ່ນຍ້ອນໄດ້ເຫັນສິ່ງມະຫັດສະຈັນ ແຕ່ຍ້ອນໄດ້ກິນປັງຢ່າງອີ່ມໝຳເທົ່ານັ້ນ. ພວກເຈົ້າຢ່າອອກແຮງຊອກຫາອາຫານທີ່ເສຍໄດ້ ແຕ່ໃຫ້ອອກແຮງຊອກຫາອາຫານທີ່ຖາວອນໝັ້ນຄົງຈົນເຖິງຊີວິດນິລັນດອນ. ອັນແມ່ນອາຫານທີ່ບຸດມະນຸດປະທານໃຫ້. ແມ່ນພຣະອົງນີ້ແລ້ວຊຶ່ງພຣະເຈົ້າພຣະບິດາໄດ້ຊົງປະທັບຕາມອບອຳນາດໃຫ້ແລ້ວ.

ພວກເຂົາຈຶ່ງທູນພຣະອົງວ່າ: ພວກເຮົາຈະທຳຢ່າງໃດເພື່ອຮ່ວມໃນວຽກການຂອງພຣະເປັນເຈົ້າ? ພຣະເຢຊູເຈົ້າກ່າວຕອບວ່າ: ວຽກການຂອງພຣະເປັນເຈົ້າຄືໃຫ້ພວກເຈົ້າເຊື່ອເຖິງພຣະອົງຜູ້ທີ່ພຣະເຈົ້າໄດ້ສົ່ງມາ. ພວກເຂົາຈຶ່ງທູນພຣະອົງວ່າ: ທ່ານຈະທຳສິ່ງອັດສະຈັນອັນໃດໃຫ້ພວກເຮົາເຫັນເພື່ອໃຫ້ພວກເຮົາເຊື່ອ? ທ່ານຈະທຳສິ່ງໃດ? ຢູ່ທີ່ປ່ງວພວກບັນພະບຸລຸດຂອງພວກເຮົາໄດ້ກິນມັນນາຕາມທີ່ໄດ້ມີຈາລຶກໄວ້ໃນພຣະຄຳພີວ່າ: ພຣະອົງໄດ້ປະທານປັງຈາກສະຫວັນມາໃຫ້ພວກເຮົາກິນ.

ພຣະເຢຊູເຈົ້າຊົງຕອບວ່າ: ເຮົາບອກພວກເຈົ້າເປັນຄວາມຈິງວ່າ: ບໍ່ແມ່ນໂມແຊໄດ້ທານປັງຈາກສະຫວັນໃຫ້ພວກເຈົ້າດອກ ແຕ່ແມ່ນພຣະບິດາຂອງເຮົາຊົງປະທານປັງແທ້ຈາກສະຫວັນແກ່ພວກເຈົ້າ. ຍ້ອນວ່າປັງຂອງພຣະເຈົ້າຄືຜູ້ທີ່ສະເດັດລົງມາຈາກສະຫວັນແລະບັນດານຊີວິດແກ່ໂລກ. ພວກເຂົາທູນພຣະອົງວ່າ: ພຣະອົງເອີຍໂຜດປະທານປັງນັ້ນໃຫ້ພວກຂ້າພະເຈົ້າສະເໝີເຖີດ. ພຣະເຢຊູເຈົ້າກ່າວຕອບວ່າ: ເຮົານີ້ເອງແມ່ນປັງປະທານຊີວິດ. ຜູ້ທີ່ມາຫາເຮົາຈະບໍ່ອຶດຢາກອີກເລີຍ ແລະຜູ້ທີ່ເຊື່ອໃນເຮົາຈະບໍ່ຫອດຫິວຕະຫລອດໄປ.

ນີ້ແມ່ນວາຈາຂອງພຣະກຣິສໂຕເຈົ້າ

**ບົດແບ່ງປັນ: ຢວງ 6, 24-35**

ໃນບົດອ່ານທີໜຶ່ງຈາກປຶ້ມອົບພະຍົບ, ພວກເຮົາເຫັນວ່າສິ່ງທີ່ປະຊາກອນຂອງພຣະເຈົ້າມີຄວາມກັງວົນແລະຖືເປັນສິ່ງສຳຄັນນັ້ນຄືອາຫານການກິນ. ເຖິງແມ່ນວ່າພວກເຂົາຈະຫວິດຈາກການເປັນຂ້ອຍທາດຢູ່ປະເທດເອຢິບແລ້ວກໍຕາມ ແຕ່ພວກເຂົາຍັງມີຄວາມຜູກພັນກັບສະພາບການເປັນຂ້ອຍທາດຍ້ອນພວກເຂົາໄດ້ກິນຢ່າງອີ່ມໜຳສຳລານ.

ໃນບົດພຣະວໍລະສານກໍເຊັ່ນດຽວກັນ, ຝູງຊົນຫລວງຫລາຍຊອກຫາພຣະເຢຊູເຈົ້າຍ້ອນພຣະອົງໄດ້ທະວີຂະໜົມປັງຫ້າກ້ອນແລະປາສອງໂຕເພື່ອລ້ຽງເກືອພວກເຂົາຢ່າງອີ່ມໜຳສຳລານ. ສິ່ງນີ້ສະທ້ອນໃຫ້ພວກເຮົາເຫັນວ່າມະນຸດມີຄວາມເປັນຫວ່ງກັງວົນເຖິງຊີວິດຝ່າຍກາຍຫລາຍກວ່າຊີວິດຝ່າຍຈິດ. ມະນຸດໃຫ້ຄວາມສຳຄັນກັບສິ່ງທີ່ສູນເສຍເປັນຫລາຍກວ່າສິ່ງທີ່ໝັ້ນຄົງຖາວອນ. ຍ້ອນຫຍັງ? ຍ້ອນພວກເຂົາຢຸດແຕ່ໃນສິ່ງທີ່ພວກເຂົາເຫັນແລະພວກເຂົາຊອກຫາ ແຕ່ພວກເຂົາບໍ່ຮູ້ຈັກເຖິງທີ່ມາແລະບໍ່ເກີດແຫ່ງຊີວິດຂອງພວກເຂົາແລະສິ່ງທີ່ພວກເຂົາໄດ້ຮັບ. ເພາະສະນັ້ນ, ພຣະເຢຊູເຈົ້າຈຶ່ງກ່າວວ່າ: ບໍ່ແມ່ນໂມແຊທີ່ປະທານປັງຈາກສະຫວັນໃຫ້ພວກເຈົ້າ ແຕ່ແມ່ນພຣະບິດາຂອງເຮົາທີ່ປະທານປັງແທ້ຈາກສະຫວັນແກ່ພວກເຈົ້າ. ແລະບັນພະບຸລຸດຂອງພວກເຈົ້າທີ່ຮັບກິນປັງຢູ່ທະເລຊາຍນັ້ນແລ້ວກໍຕ້ອງຕາຍ ແຕ່ປັງທີ່ເຮົາປະທານໃຫ້ພວກເຈົ້ານັ້ນ ຈະໃຫ້ພວກເຈົ້າມີຊີວິດແລະແມ່ນຊີວິດທີ່ໝັ້ນຄົງຖາວອນ. ໝາຍຄວາມວ່າຊີວິດທີ່ພວກເຮົາໄດ້ຮັບໃນແຕ່ລະວັນນັ້ນບໍ່ໄດ້ມາຈາກມະນຸດ ແຕ່ມາຈາກພຣະເຈົ້າ. ແລະສະບຽງອາຫານທີ່ຫລໍ່ລ້ຽງຮ່າງກາຍຂອງພວກເຮົາໃນແຕ່ລະມື້ບໍ່ໄດ້ມາຈາກຜົນງານແລະຄວາມສາມາດຂອງພວກເຮົາ ແຕ່ແມ່ນພຣະເຈົ້າປະທານໃຫ້ພວກເຮົາ. ແລະເປົ້າໝາຍຊີວິດຂອງມະນຸດບໍ່ໄດ້ຢຸດຢູ່ແຕ່ໃນໂລກນີ້ ແຕ່ຢູ່ໃນໂລກໜ້າ, ບ່ອນທີ່ມະນຸດຈະຢູ່ຮ່ວມສຸກກັບພຣະເຈົ້າຕະຫລອດໄປ. ເມື່ອພວກເຮົາເຂົ້າໃຈດັ່ງນີ້ແລ້ວ, ແນ່ນອນສິ່ງທີ່ພວກເຮົາຊອກຫາບໍ່ແມ່ນອາຫານຢູ່ໃນໂລກນີ້ ແຕ່ແມ່ນອາຫານທິບທີ່ລົງມາຈາກສະຫວັນ. ແລະພວກເຮົາສາມາດຮັບກິນອາຫານທິບນີ້ໄດ້ໃນງານລ້ຽງຂອງພຣະຊຸມພານ້ອຍອັນແມ່ນມະຫາບູຊາມິຊຊາ.

ຕະຫລອດທັງມື້ຂອງອາທິດ, ພວກເຮົາມີເວລາຊອກຫາເຂົ້າປາອາຫານເພື່ອລ້ຽງຊີບພວກເຮົາ ແຕ່ມື້ທີເຈັດພຣະເຈົ້າເຊື້ອເຊີນພວກເຮົາໃຫ້ຫັນມາຫາພຣະອົງ, ມາຫາອາຫານແທ້ທີ່ຈະໃຫ້ຊີວິດແທ້ແກ່ພວກເຮົານັ້ນຄືອົງພຣະເຢຊູກຣິສໂຕເຈົ້າ. ພຣະອົງນີ້ແລທີ່ເປັນທັງບໍ່ເກີດຂອງຊີວິດ ແລະເປັນທັງອາຫານທີ່ຈະໃຫ້ຊີວິດນິລັນດອນແກ່ພວກເຮົາ.

ຂໍໃຫ້ວາຈາຂອງພຣະເຈົ້າໃນວັນນີ້ຊ່ວຍພວກເຮົາໃຫ້ຫິວຫາແຕ່ອາຫານທີ່ມາຈາກສະຫວັນນັ້ນຄືວາຈາ, ພຣະກາຍແລະພຣະໂລຫິດຂອງພຣະເຢຊູເຈົ້າ. ຍ້ອນພຣະອົງກ່າວວ່າ: ຜູ້ທີ່ມາຫາເຮົາຈະບໍ່ອຶດຢາກອີກເລີຍ ແລະຜູ້ທີ່ເຊື່ອໃນເຮົາຈະບໍ່ຫອດຫິວຕະຫລອດໄປ. ອາແມນ

ຄຸນພໍ່ ອົງຕວນ ກຽດຕິສັກ